ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0134 /ທຄຕລ. 2026
ນະຄອນຫຼວງວຽງຈັນ, ວັນທີ: 15 JAN 2026

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ ແລະ ວິສາຫະກິດ ທຳຄວາມສະອາດ ທີ່ນັບຖື.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາທຳຄວາມສະອາດຕູ້ ATM.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດ ແລະ ວິສາຫະກິດ ທຳຄວາມສະອາດ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາທຳຄວາມສະອາດຕູ້ ATM ຂອງ ທຄຕລ ຢູ່ພາຍໃນນະຄອນຫຼວງວຽງຈັນ ດັ່ງລາຍລະອຽດລຸ່ມນີ້:

## I. ລາຍການໜ້າວຽກປະກອບມີ

1. ເຊັດຝຸ່ນ ແລະ ຄາບເປື້ອນຢູ່ອ້ອມຮອບຕູ້ ແລະ ຈໍຕູ້ ATM;
2. ເຊັດແກ້ວຂ້າງດ້ານໃນ ແລະ ດ້ານນອກ;
3. ປັດກວາດ ແລະ ອະນາໄມພື້ນຢູ່ດ້ານໃນ ແລະ ດ້ານນອກ ພ້ອມອ້ອມຮອບຕູ້;
4. ປັດໄຍແມງມູມດ້ານໃນ ແລະ ດ້ານນອກ ພ້ອມອ້ອມຮອບຕູ້;
5. ມ້ຽນຂີ້ເຫຍື້ອທີ່ລູກຄ້າຖິ້ມບໍລິເວນຕູ້;
6. ຕັດງ່າໄມ້ທີ່ເຕື່ອຍລົງມາໃສ່ຕູ້ (ຖ້າມີ);
7. ອະນາໄມບໍລິເວນຕູ້ໃຫ້ມີຄວາມສະອາດຈົບງາມ;
8. ຕ້ອງປະຕິບັດວຽກ ວັນຈັນ-ວັນເສົາ ມື້ລະຄັ້ງ ກໍລະນີເປື້ອນ ຕ້ອງໄດ້ໄປອານາໄມຕື່ມ;

## II. ຈຳນວນຂອງຕູ້ ATM

ປະຈຸບັນປະກອບມີທັງໝົດ 52 ຕູ້ ດັ່ງລຸ່ມນີ້:

| ລ/ດ | ຈຸດທີ່ຕັ້ງ | ບ້ານ | ເມືອງ |
|---|---|---|---|
| 1 | ຮ້ານຄ້າໂຊກໄຊ ໜອງທາ | ໜອງທາ | ຈັນທະບູລີ |
| 2 | ໂຮງຮຽນ ມສ ເຈົ້າອານຸວົງ | ອານຸ | ຈັນທະບູລີ |
| 3 | ໂຮງໝໍມະໂຫສົດ | ເກົ້າຍອດ | ຈັນທະບູລີ |
| 4 | ວັດຈັນ | ວັດຈັນ | ຈັນທະບູລີ |
| 5 | ສະຖານີໄຟຟ້າສີສະເກດ | ສີສະເກດ | ຈັນທະບູລີ |
| 6 | ຮ້ານຄ້າເຈມາກ ໂພນສະຫວ່າງ | ໂພນສະຫວ່າງ | ຈັນທະບູລີ |
| 7 | ຫ້ອງການປົກຄອງນະຄອນຫຼວງ | ອານຸ | ຈັນທະບູລີ |
| 8 | ວິທະຍາໄລສັບພະວິຊາ | ສະພານທອງ | ສີສັດຕະນາກ |
| 9 | ຄະນະວິສາວະກຳສາດ ຄວສ | ໂສກປ່າຫຼວງ | ສີສັດຕະນາກ |
| 10 | ໜ້າບໍລິສັດລາວເຮົາ | ດອນກອຍ | ສີສັດຕະນາກ |
| 11 | ຫຼັກ4 | ທ່າພະລານໄຊ | ສີສັດຕະນາກ |
| 12 | ໂຮງໝໍເສດຖາທິລາດ | ດອນກອຍ | ສີສັດຕະນາກ |
| 13 | ໜ້າຮ້ານເອັມເຄ ໄອເຕັກ | ຮ່ອງແກ | ສີສັດຕະນາກ |
| 14 | ໜ້າອາຄານວຽງວັງ | ດົງປ່າລານທ່າ | ສີສັດຕະນາກ |
| 15 | ປຕທ ດອນກອຍ | ດອນກອຍ | ສີໂຄດຕະບອງ |
| 16 | ຫຼັກ2 ຂ້າງປ້ອມຕຳຫຼວດ | ສີຖານເໜືອ | ສີໂຄດຕະບອງ |
| 17 | ຫຼັກ2 ຂ້າງປ້ອມຕຳຫຼວດ | ສີຖານເໜືອ | ສີໂຄດຕະບອງ |
| 18 | ຫ້ອງການປົກຄອງບ້ານອາກາດ | ອາກາດ | ສີໂຄດຕະບອງ |
| 19 | ຊິນດາດໂປຍຊ໋ຽນ | ໜອງສະໂນຄຳ | ສີໂຄດຕະບອງ |
| 20 | ຮ້ານຄ້າໂຊກໄຊ ປາກທ້າງ | ປາກທ້າງ | ສີໂຄດຕະບອງ |
| 21 | ຮ້ານຄ້າໂຊກໄຊ ດົງນາໂຊກ | ດົງນາໂຊກ | ສີໂຄດຕະບອງ |
| 22 | ຕະຫຼາດເກົ້າລ້ຽວ | ເກົ້າລ້ຽວ | ສີໂຄດຕະບອງ |
| 23 | ສູນຮັກສາສຸຂະພາບຕາທົ່ງປົ່ງ | ທົ່ງປົ່ງ | ສີໂຄດຕະບອງ |
| 24 | ໂຍທາ ທົ່ງປົ່ງ | ທົ່ງປົ່ງ | ສີໂຄດຕະບອງ |
| 25 | ໂຮງງານຊານຕິກລາວ ທົ່ງປົ່ງ | ທົ່ງປົ່ງ | ສີໂຄດຕະບອງ |
| 26 | 4 ແຍກທາງດ່ວນ ວຽງຈັນ-ວັງວຽງ | ໄຊມຸງຄຸນ | ສີໂຄດຕະບອງ |
| 27 | ສະໜາມບິນສາກົນວັດໄຕ ຕຶກພາຍໃນ | ວັດໄຕ | ສີໂຄດຕະບອງ |
| 28 | ສະໜາມບິນສາກົນວັດໄຕ ຕຶກສາກົນ | ວັດໄຕ | ສີໂຄດຕະບອງ |
| 29 | ຫຼັກ8 ໜ້າໂຮງງານຢາເລກ3 | ສີມຫວັງ | ຫາດຊາຍຟອງ |
| 30 | ສະຖາບັນການເງິນ-ການບັນຊີ ດົງຄຳຊ້າງ | ດົງຄຳຊ້າງ | ຫາດຊາຍຟອງ |
| 31 | ສວນນ້ຳອິນແປງ | ດົງໂພສີ | ຫາດຊາຍຟອງ |
| 32 | ຕະຫຼາດພະຂາວ | ພະຂາວ | ໄຊທານີ |
| 33 | ຕະຫຼາດສີວິໄລ | ສີວິໄລ | ໄຊທານີ |
| 34 | ສະຖາບັນການທະນາຄານ | ຄຳຮຸ່ງ | ໄຊທານີ |
| 35 | ວິທະຍາໄລ ສຸກສະຫວັດ | ຫ້ວຍຫົງ | ໄຊທານີ |
| 36 | ໂຮງໝໍ ແມ່ ແລະ ເດັກ | ໜອງພະຍາ | ໄຊທານີ |
| 37 | ບຸກຊ໊ອບ ມຊ | ດົງໂດກ | ໄຊທານີ |
| 38 | ຫໍພັກຊີເກມ | ໜອງວຽງຄຳ | ໄຊທານີ |
| 39 | ສຸວັນນີ ໂພນຕ້ອງ | ໂພນຕ້ອງ | ໄຊທານີ |
| 40 | ດົງປ່າແຫຼບ | ດົງປ່າແຫຼບ | ໄຊທານີ |
| 41 | ຫໍພິພິຕະພັນໄກສອນຫຼັກ7 | ພະຂາວ | ໄຊທານີ |
| 42 | ຫຼັກ6 | ພະຂາວ | ໄຊທານີ |
| 43 | ກະຊວງການເງິນ | ໂພນໄຊ | ໄຊເສດຖາ |
| 44 | ຮ້ານຄ້າໂຊກໄຊ ຫົວຂົວ | ຫົວຂົວ | ໄຊເສດຖາ |
| 45 | ສະພາແຫ່ງຊາດ | ທາດຫຼວງ | ໄຊເສດຖາ |
| 46 | ເວີມາກ | ໂພນເຄັງ | ໄຊເສດຖາ |
| 47 | ໂຮງຮຽນ ມສ ໂພນທັນ | ໂພນທັນ | ໄຊເສດຖາ |
| 48 | ຮ້ານຄ້າ ເຈມາກ ວັງຊາຍ | ວັງຊາຍ | ໄຊເສດຖາ |
| 49 | ສະໜາມມ້າ | ດົງຈອງ | ໄຊເສດຖາ |
| 50 | ຮ້ານຈັນທິດາມາກ | ຄຳສະຫວາດ | ໄຊເສດຖາ |
| 51 | ສູນຄວາມງາມ ບິວຕີລາຍ | ອາມອນ | ໄຊເສດຖາ |
| 52 | ຫ້ອງການບ້ານເມືອງນ້ອຍ | ເມືອງນ້ອຍ | ໄຊເສດຖາ |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

## III. ເງື່ອນໄຂການປະກອບເອກະສານການປະມູນ

### 1. ເອກະສານຊອງທີ 1 (ບໍ່ປິດຊອງ)

1) ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດ (ສໍາເນົາໃບທະບຽນວິຫາສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2024 ແລະ ໃບອະນຸຍາດດໍາເນີນທຸລະກິດ);
2) ເອກະສານກ່ຽວກັບມາດຕະຖານໃຫ້ລະບຸຄົບຖ້ວນກ່ຽວກັບວັດສະດຸ, ຍີ່ຫໍ້/ລຸ້ນ ຂອງນ້ຳຢາທໍາຄວາມສະອາດທີ່ຈະນໍາໃຊ້, ຜ້າແພທີ່ນໍາໃຊ້, ວິທີການປະຕິບັດວຽກ ເຊິ່ງບໍລິສັດຕ້ອງຮັບຜິດຊອບຖົງຢາງໃສ່ຂີ້ເຫຍື້ອ, ອຸປະກອນຮັບໃຊ້ທໍາຄວາມສະອາດ ແລະ ພາຫະນະເດີນທາງໄປແຕ່ລະຈຸດເອງ.
3) ຄຸນວຸດທິຂອງບໍລິສັດ ແລະ ປະສົບການທີ່ເຮັດວຽກດັ່ງກ່າວ ຫຼື ວຽກທີ່ຄ້າຍຄືລັກສະນະດຽວກັນ;
4) ກໍານົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບວັນທີ **13/02/2026** ເວລາ **15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສໍານັກງານໃຫຍ່ ທີ່ປ່ອງຂາອອກ-ຂາເຂົ້າ ອາຄານ C ຊັ້ນ 4.

### 2. ເອກະສານຊອງທີ 2 (ປິດຊອງ)

1) ໃບສະເໜີ ຕ້ອງລະບຸແຍກເປັນລາຄາຕໍ່ໜ່ວຍຕໍ່ເດືອນ ແລະ ຕໍ່ປີ ພ້ອມທັງສະແດງລາຄາລວມອາກອນມູນຄ່າທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ;
2) ໃນວັນທີ **17/02/2026** ເວລາ **9:00** ໂມງ ແມ່ນມື້ເປີດຊອງປະມູນ ແຈ້ງໃຫ້ບໍລິສັດຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມອາຄານ C ຊັ້ນ 5 ຫ້ອງ 5/2;
3) ຜູ້ຮັບເໝົາ ຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ **17/05/2026**) ຫຼື ແຊັກທີ່ວິຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ) ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

## IV. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ຊະນະການປະມູນ

1) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ໄລຍະເວລາ 02 ປີ ນັບແຕ່ວັນທີ 01/04/2026-31/03/2028 ແລະ ຄ່າທໍານຽມໃນການຈົດທະບຽນສັນຍາ ແມ່ນຄວາມຮັບຜິດຊອບຂອງຜູ້ຮັບເໝົາ;
2) ການຊໍາລະຄ່າບໍລິການແມ່ນເປັນສະກຸນເງິນກີບເປັນລາຍເດືອນລວມອາກອນມູນຄ່າເພີ່ມ ຕາມຈໍານວນຕູ້ ATM ທີ່ໄດ້ອານາໄມຕົວຈິງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**ຜູ້ອໍານວຍການ**

ນ.ສາຍສະໝອນ ຈັນທະຈັກ


**<u>ຜູ້ປະສານງານ:</u>**

ທ່ານ ພູວອນ ສໍອິນໄຊ 020 5955 9889

ທ້າວ ຄໍາຫຼ້າ ເພັດມີໄຊ 020 77777096

# ໃບສະເໜີລາຄາ

- ອີງຕາມ ໃບແຈ້ງປະມູນ ສະບັບເລກທີ …………/ທຄຕລ…………………, ລົງວັນທີ …………………..

| ລ/ດ | ບໍລິສັດ | ເລກທີໃບ ທະບຽນວິສາຫະກິດ | ເລກທີໃບຢັ້ງຢືນການເສຍອາກອນ 2024 | ເລກທີໃບອະນຸຍາດດຳເນີນທຸລະກິດ | ຈຳນວນຕູ້ | ລາຄາຕໍ່ຕູ້ຕໍ່ເດືອນ ລວມອາກອນ | ລາຄາທັງໝົດຕໍ່ເດືອນ ລວມອາກອນ | ລາຄາທັງໝົດຕໍ່ 1 ປີ ລວມອາກອນ | ລາຄາທັງໝົດຕໍ່ 2 ປີ ລວມອາກອນ | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| 1 | | | | | 52 | | | | | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ທີ່…………………………………………, ວັນທີ……………………………

**ຜູ້ອຳນວຍການບໍລິສັດ……………………**

ຜູ້ປະສານງານບໍລິສັດ:
ຊື່:
ໂທ: